ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 1498 / ກຊສ

ນະຄອນຫຼວງວຽງຈັນ, ວັນທີ 25 ຕຸລາ 2002

**ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ**

**ວ່າດ້ວຍການຮັບຮອງບັນຊີຢາຄວບຄຸມທີ່ຈ່າຍ-ຂາຍ ແລະ ນຳໃຊ້ຕາມໃບ ສັ່ງຢາຂອງແພດ ແລະ ບັນຊີຢາສາມັນທີ່ຈ່າຍ-ຂາຍແລະນຳໃຊ້ໄດ້ທົ່ວໄປ.**

- ອີງຕາມ ກົດໝາຍວ່າດ້ວຍຢາແລະຜະລິດຕະພັນການແພດ ມາດຕາ 18,ການຈັດປະເພດຢາ
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທະນະສຸກ ສະບັບເລກທີ 020/ນຍ, ລົງວັນທີ 9 ມີນາ 1999.
- ອີງຕາມ ການສະເໜີ ຂອງກົມອາຫານ ແລະ ຢາ ສະບັບເລກທີ 1701/02.ກອຢ, ລົງວັນທີ 18 ກັນຍາ 2002

**ລັດຖະມົນຕີວ່າການກະຊວງສາທາລະນະສຸກຕົກລົງ :**

**ມາດຕາ 1. ຮັບຮອງເອົາ :**

1. ບັນຊີຢາຄວບຄຸມພິເສດ ທີ່ໃຊ້ສະເພາະຢູ່ແຕ່ໃນໂຮງໝໍ ຕາມໃບສັ່ງຢາຂອງແພດຊ່ຽວຊານ ເທົ່ານັ້ນ (ມີເຄື່ອງໝາຍ ** ) ລວມມີ 15ໝວດຢາ = 98 ລາຍການ.
2. ບັນຊີຢາຄວບຄຸມທົ່ວໄປ ທີ່ຕ້ອງຈ່າຍ-ຂາຍ ແລະ ໃຊ້ຕາມໃບສັ່ງຢາຂອງແພດໝໍ, ລວມທັງລາຍການຢາຄວບຄຸມພິເສດ (**), ຊຶ່ງຈັດແບ່ງຕາມໝວດປິ່ນປົວລວມມີ 26ໝວດ, ມີ429ລາຍການ.
3. ບັນຊີຢາສາມັນທີ່ຈ່າຍ-ຂາຍ ແລະ ນຳໃຊ້ໄດ້ທົ່ວໄປ ຊຶ່ງຈັດແບ່ງຕາມຕົວອັກສອນ ລວມມີ56 ລາຍການ, ໃຫ້ເປັນເອກະສານທາງການ ເພື່ອນຳໃຊ້ໃນຂອບເຂດທົ່ວປະເທດ.

**ມາດຕາ 2.** ມອບໃຫ້ກົມອາຫານ ແລະ ຢາ ເປັນໃຈກາງປະສານງານກັບພາກສ່ວນອື່ນທີ່ກ່ຽວຂ້ອງ ພ້ອມທັງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ